ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ..913../ອຊ

ອຸດົມໄຊ, ວັນທີ..11...08...2023

# ຄຳສັ່ງ

## ວ່າດ້ວຍ ການກວດກາ ແລະ ປະຕິບັດມາດຕະການ ຕໍ່ຜູ້ມີພາຫະນະໄວ້ຄອບຄອງທີ່ຍັງບໍ່ໄດ້ເສຍພາສີ-ອາກອນຕາມລະບຽບກົດໝາຍ

ເຖິງ: ພະນັກງານ, ທະຫານ, ຕຳຫຼວດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແຂວງ ອຸດົມໄຊ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ຄຳສັ່ງວ່າດ້ວຍການກວດກາ ແລະ ປະຕິບັດຕາມມາດຕະການ ຕໍ່ຜູ້ທີ່ນຳເຂົ້າ ແລະ ການນຳໃຊ້ຍານພາຫະນະທຸກປະເພດ ແບບບໍ່ຖືກຕ້ອງ ສະບັບເລກທີ 20/ນຍ, ລົງວັນທີ 08 ຕຸລາ 2021.

ການແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ ຢູ່ແຂວງອຸດົມໄຊ ໃນໄລຍະຜ່ານມາແມ່ນໄດ້ຈັດຕັ້ງປະຕິບັດຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 20, ລົງວັນທີ 8 ຕຸລາ 2021 ຕາມວາລະແຫ່ງຊາດໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ສູນກາງ ແລະ ແຂວງວາງອອກ, ເຊິ່ງຜົນຂອງການແກ້ໄຂໃນໄລຍະຜ່ານມາແມ່ນສາມາດມາດ ແກ້ໄຂໄດ້ຈຳນວນຫຼາຍສົມຄວນຕາມຈຳນວນພາຫານະທີ່ໄດ້ຂຶ້ນບັນຊີໄວ້, ແຕ່ມາຮອດປະຈຸບັນຍັງມີພາຫະນະ ທີ່ນຳເຂົ້າບໍ່ຖືກຕ້ອງຈຳນວນຫຼາຍ ຢູ່ພາຍໃນແຂວງອຸດົມໄຊ ສະນັ້ນ, ເພື່ອສືບຕໍ່ການປະຕິບັດວາລະແຫ່ງຊາດກຳນົດອອກນັ້ນ ຈຶ່ງໄດ້ສືບຕໍ່ແກ້ພາຫະນະນຳເຂົ້າບໍ່ຖືກຕ້ອງ ໂດຍໃຫ້ຜູ້ທີ່ຄອບຄອງພາຫະນະນຳເຂົ້າບໍ່ຖືກຕ້ອງນຳໄປແຈ້ງເສຍພາສີ-ອາກອນ ແລະ ດຳເນີນການຂຶ້ນປ້າຍໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ພາຍໃນກຳນົດເວລາ 2 ເດືອນ.

## ເຈົ້າແຂວງ ອອກຄຳສັ່ງ:

1. ເຖິງພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ມີຄວາມຕື່ນຕົວນຳເອົາພາຫະນະທີ່ຢູ່ໃນການຄອບຄອງຂອງຕົນມາແຈ້ງເສຍພາສີໃຫ້ຖືກຕ້ອງຕາມລະບຽບກົດໝາຍ ພ້ອມດຽວກັນນັ້ນມອບໃຫ້ບັນດາພະແນກການ, ອົງການທຽບເທົ່າພະແນກ ແລະ 7 ເມືອງ ເປັນເຈົ້າການໃນການ ສະກັດກັ້ນການລັກລອບນຳເຂົ້າ ແລະ ການນຳໃຊ້ພາຫະນະທີ່ບໍ່ຖືກຕ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ສາມາດແກ້ໄຂໄດ້ຢ່າງເດັດຂາດ ນັບແຕ່ອອກຄຳສັ່ງສະບັບນີ້ ຫາ ວັນທີ 30 ກັນຍາ 2023;
2. ຮຽກຮ້ອງໃຫ້ຜູ້ທີ່ມີພາຫານະໄວ້ໃນຄອບຄອງທີ່ບໍ່ທັນຂຶ້ນທະບຽນ, ນຳໃຊ້ທະບຽນປອມ, ພາຫະນະທີ່ໄດ້ສະສາງອອກຈາກບັນຊີຊັບສິນຂອງລັດແຕ່ຍັງບໍ່ທັນເສຍພາສີ ແລະ ພາຫະນະທີ່ລັກລອບນຳເຂົ້າມາ ແມ່ນໃຫ້ຮີບຮ້ອນຕື່ນຕົວນຳ

ເອົາພາຫະນະໄປແຈ້ງເສຍພາສີດ້ວຍຄວາມສະໝັກໃຈນຳເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອດຳເນີນ ການຕາມກົດໝາຍ ແລະ ລະບຽບການ;

3. ຖ້າຜູ້ໃດມີພາຫະນະບໍ່ຖືກຕ້ອງໄວ້ຄອບຄອງຫາກບໍ່ມາແຈ້ງເສຍພາສີ ຖ້າກາຍກຳນົດເວລາທີ່ໄດ້ກຳນົດຢູ່ໃນຂໍ້ 01 ໃນກໍລະນີເຈົ້າໜ້າທີ່ກວດກາພົບເຫັນ ແມ່ນຈະໄດ້ປະຕິບັດມາດຕະການເຂັ້ມງວດ, ຈະບໍ່ໃຫ້ແກ້ໄຂຜ່ອນຜັນ, ນະໂຍບາຍ, ຕ້ອງຍຶດ ພ້ອມທັງດຳເນີນການ ໄປຕາມຂະບວນການຍຸຕິທຳເທົ່ານັ້ນຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
4. ມອບໃຫ້ພະແນກການເງິນແຂວງ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໃນການຈົດທະບຽນຢັ້ງຢືນຄວາມຖືກຕ້ອງ ທາງດ້ານເອກະສານພາຫະນະແຕ່ລະຄັນທີ່ໄດ້ເສຍພາສີຖືກຕ້ອງ, ຄົບຖ້ວນ ແລະ ເປັນເສນາທິການໃນການສັງລວມຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວແລ້ວ ລາຍງານໃຫ້ຂັ້ນເທິງຮັບຊາບເປັນອາທິດ, ເດືອນ ຢ່າງເປັນປົກກະຕິ ແລະ ຈັດຕັ້ງປະຕິບັດຕາມສິດ, ໜ້າທີ່ຂອງຕົນຢ່າງເຂັ້ມງວດ;
5. ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ອຳນວຍຄວາມສະດວກໃນການກວດກາ, ອອກໃບຢັ້ງຢືນທາງດ້ານເຕັກນິກຂອງພາຫະນະ ເພື່ອປະກອບເອກະສານເສຍພາສີ ແລະ ປະກອບເອກະສານຂຶ້ນທະບຽນພາຫະນະໃຫ້ຖືກຕ້ອງ;
6. ມອບໃຫ້ພາສີປະຈຳແຂວງ ດຳເນີນການຕາມຂັ້ນຕອນຄື: ສອບຖາມ, ເກັບກຳຂໍ້ມູນແຫຼ່ງທີ່ມາຂອງພາຫະນະ, ປະກອບເອກະສານ ເສຍພາສີໃຫ້ຕ້ອງຕາມກົດໝາຍ ແລະ ລະບຽບການ ພ້ອມກັນນັ້ນ ໃຫ້ກວດກາລາດຕະເວນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງຮ້ານຂາຍລົດນຳເຂົ້າໃຫ້ເປັນປົກກະຕິ;
7. ມອບໃຫ້ເຈົ້າໜ້າທີ່ ປກສ ແຂວງ ຕັ້ງຈຸດກວດກາ ເພື່ອກວດກາພາຫະນະທີ່ບໍ່ຖືກຕ້ອງ, ເກັບກຳສະຖິຕິ ພ້ອມທັງສ້າງບົດບັນທຶກກັບເຈົ້າຂອງພາຫະນະ ພ້ອມທັງປະຕິບັດມາດຕະການຕໍ່ຜູ້ລະເມີດ;
8. ມອບໃຫ້ກອງບັນຊາການທະຫານແຂວງ ເຂົ້າຮ່ວມເປັນຄະນະໃນການຈັດຕັ້ງປະຕິບັດ ແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງຕາມພາລະບົດບາດຂອງຕົນ;
9. ບັນດາຂະແໜງການທີ່ກ່ຽວຂ້ອງໃຫ້ປະຕິບັດຕາມພາລະບົດບາດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
10. ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ປະຊຸມປຶກສາຫາລືພາຍໃນຄະນະເພື່ອແກ້ໄຂ ຫາກພົບຂໍ້ຫຍຸ້ງຍາກ ແມ່ນລາຍງານຄືນຕໍ່ທ່ານເຈົ້າແຂວງ ໂດຍຜ່ານພະແນກການເງິນ ເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ;
11. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບຸນຄົງ ຫຼ້າຈຽມພອນ